# ບົດຮຽນໂຮງຮຽນວັນອາທິດ
## ວັນອາທິດທີ 3 ສິງຫາ 2008 (08-03-2008)

---

## <u>ຊີວິດທີ່ມີໃຈຈົດຈໍ່</u>

**<u>ຂໍ້ພຣະຄັມພີໃນບົດຮຽນ:</u>** ເຮັບເຣີ 1:1-6, 10-14; 2:1-4

**<u>ຄຳຖາມຊີວິດ:</u>** ເປັນດ້ວຍເຫດໃດຂ້າພະເຈົ້າຈຶ່ງມີໃຈທີ່ຈົດຈໍ່ຕໍ່ຊີວິດຂອງຕົນເອງດ້ວຍອົງພຣະເຢຊູ?

**<u>ພຣະຄັມພີແຫ່ງຄວາມຈິງ:</u>** ເພາະວ່າອົງພຣະເຢຊູເປັນຜູ້ປະເສີດ, ແມ່ນອົງທີ່ພຣະເຈົ້າໄດ້ເປີດເຜີຍໃຫ້ຮູ້ຢ່າງຄົບຖ້ວນ, ດັ່ງນັ້ນ, ພວກເຮົາຈຶ່ງປັກຕາເບິ່ງພຣະອົງ.

**<u>ຜົນສະທ້ອນຕໍ່ຊີວິດ:</u>** ບົດຮຽນນີ້ໄດ້ຂຽນຂຶ້ນມາເພື່ອຊ່ອຍໃຫ້ທ່ານຄົ້ນຫາຫົນທາງດີທີ່ສຸດຈາກພຣະເຈົ້າໃນຊີວິດປະຈຳວັນຂອງທ່ານໂດຍ:

- ເພື່ອຊອກຫາຫົນທາງໃຫ້ຈົດຈໍ່ຕໍ່ພຣະເຢຊູ
- ໃຫ້ມີແຜນການໂດຍສະເພາະທີ່ທ່ານຕ້ອງກະທຳໃນການຈົດຈໍ່ຕໍ່ພຣະເຢຊູໃນຊີວິດ.

ເພື່ອນຂອງນາງ ຊູຊານໄດ້ຊັກຊວນໃຫ້ລາວໄປຮ່ວມພິທີຄຶດເຖິງວັນຄົບຮອບທີ່ພວກກໍ່ການຮ້າຍໄດ້ທຳລາຍໃນ 9/11. "ຈະມີການອ້ອນວອນຈາກຫລາຍໆສາສນາ ຈາກອາຈານພວກຢິວ, ອາຈານຂອງພວກອິສລາມ, ແລະຄູບາຈາກສາສນາພຸດ, ແລະຈາກຄຸນພໍ່ຂອງພວກຄັດໂຕລິກ, ພວກເຮົາມີຫລາຍໆທາງທີ່ຈະເຂົ້າໄປຫາພຣະເຈົ້າ." ນາງບໍ່ເຫັນດີແລະລັງເລໃຈໃນການເຂົ້າຮ່ວມ. ຜູ້ເປັນເພື່ອນກໍເຮັດສີໜ້າບໍ່ດີໃສ່ ແຕ່ນາງຊູຊັນຮູ້ສຶກບໍ່ສະບາຍໃຈໃນເມື່ອໄດ້ຍິນຄຳອ້ອນວອນຈາກຫົວໜ້າສາສນາຕ່າງໆ ເພາະບໍ່ໄດ້ເຮັດໃນນາມຂອງພຣະເຢຊູ. ນາງ ຊູຊັນຄວນປະຕິບັດຕົວແນວໃດ ຫລືຈະເວົ້າແນວໃດ?

ໃນປຶ້ມພຣະຄັມພີ ເຮັບເຣີ ໄດ້ເວົ້າເຖິງຄວາມຍິ່ງໃຫຍ່ຂອງອົງພຣະເຢຊູເປັນສິ່ງສຳຄັນໃນພຣະຄຣິສຕະທັມພາກພຣະສັນຍາໃໝ່. ປຶ້ມນີ້ໄດ້ບອກເຖິງສິ່ງຈຳເປັນໃຫ້ພວກຢິວທີ່ເປັນຄຣິສະຕຽນເອົາໃຈໃສ່ຕໍ່ອັນຕະລາຍທີ່ຈະກັບຄືນໄປຫາສາສນາເກົ່າ ຊຶ່ງມີຄວາມແຕກຕ່າງກັນລະຫວ່າງສາສນາຢິວແລະຄຣິສະຕຽນ. ຄຳສອນນີ້ກໍເຫັນວ່າເອົາປະກອບໃຊ້ໄດ້ໃນທຸກວັນນີ້ ເພາະຫລາຍໆເທື່ອຄຣິສະຕຽນຖືກບັງຄັບໃຫ້ປະຕິເສດຄວາມຍິ່ງໃຫຍ່ຂອງອົງພຣະເຢຊູຄຣິດ.

## <u>ສຶກສາພຣະຄັມພີ</u>

### 1. <u>ພຣະເຈົ້າໄດ້ຕັດກ່າວ</u> (ເຮັບເຣີ 1:1-3)

ໃນເຮັບເຣີ ຂໍ້1-2 ໄດ້ບອກເຖິງຄວາມແຕກຕ່າງລະຫວ່າງພຣະຄັມພີເດີມ ແລະຄຳທຳນວາຍສຳເຣັດໃນພຣະຄັມພີໃໝ່. ໃນພຣະຄັມພີເດີມ ພຣະເຈົ້າໄດ້**ຕັດກ່າວ**ມາແລ້ວ ແລະໃນພຣະຄັມພີໃໝ່ພຣະເຈົ້າໄດ້**ຕັດກ່າວ ແລະກໍຍັງສືບຕໍ່ໄປອີກໃນອະນາຄົດ.** ຄຳເວົ້າວ່າ ຕັດກ່າວ ແລະກໍຍັງສືບຕໍ່ໄປນັ້ນມີຄວາມໝາຍວ່າ ພຣະເຈົ້າໄດ້ຕັດກ່າວ ແລະ ກໍເຮັດສຳເຣັດລົງໃນອົງພຣະເຢຊູໃນທີ່ສຸດ, ເຣື່ອງນີ້ກໍຍັງມີອຳນາດສາມາດປ່ຽນແປງຊີວິດຂອງມະນຸດເຮົາໃນທຸກວັນນີ້.

ໃນພຣະຄັມພີເດີມ ພຣະເຈົ້າໄດ້ຕັດກ່າວຕໍ່**ບັນພະບູຣຸດ**, ຄືພວກປູ່ຍ່າຕາຍາຍຂອງພວກຢິວ ຊຶ່ງເປັນຜູ້ຮັບຈົດໝາຍທີ່ໄດ້ຂຽນເຖິງພວກເຂົາ. ໃນພຣະຄັມພີໃໝ່ **ພຣະເຈົ້າໄດ້ເວົ້າກັບພວກເຮົາ.**

ໃນພຣະຄັມພີເດີມ ພຣະເຈົ້າໄດ້ຕັດສັ່ງໂດຍ**ຜູ້ປະກາດພຣະທັມ**, ແຕ່ໃນທຸກວັນນີ້ ພຣະເຈົ້າໄດ້ຕັດກ່າວໃນທາງ**ພຣະບຸດ** ຄືອົງພຣະເຢຊູຄຣິດ. ໃນພຣະຄັມພີເດີມ ພຣະເຈົ້າໄດ້ຕັດກ່າວ**ໃນເວລາແຕກຕ່າງກັນ** (ລະຍະເວລາຈາກ ອັບຣາ

ຣາມເຖິງມາລາກີ ໃຊ້ເວລາ 1700 ປີ). ພຣະເຈົ້າຍັງໄດ້ຕັດໃນວິທີທາງແຕກຕ່າງກັນອີກ (ໂດຍການທຳນວາຍ, ນິມິດ, ເພງສັນເສີນ, ກົດລະບຽບ ແລະປະວັດສາດ). **ແຕ່ໃນຄາວສຸດທ້າຍນີ້** (ໃນສມັຍຂອງພຣະຄັມພີໃໝ່) ພຣະເຈົ້າໄດ້ຕັດກ່າວເປັນສິ່ງທີ່ຄົບຖ້ວນບໍຣິບູນຊຶ່ງສຳເຣັດໃນອົງພຣະເຢຊູ. ພຣະເຢຊູເປັນອົງປະເສີດແລະຄົບຖ້ວນທີ່ພຣະເຈົ້າໄດ້ເປີດເຜີຍໃຫ້ມະນຸດໄດ້ຮູ້.

ໃນຂໍ້ 2-3, ຜູ້ຂຽນປຶ້ມນີ້ໄດ້ເວົ້າເຖິງສິ່ງຍິ່ງໃຫຍ່ສຳຄັນ 7 ປະກາດເຖິງອົງພຣະເຢຊູ. ນຶ່ງ, ພຣະເຢຊູເປັນ**ມໍຣະດົກຂອງທຸກສິ່ງຢ່າງ**. ນີ້ບໍ່ໄດ້ໝາຍຄວາມວ່າພຣະເຢຊູເປັນຜູ້ໄດ້ຮັບການເລື່ອນຊັ້ນ. ແຕ່ໝາຍຄວາມວ່າໃນຂໍ້ທີສອງວ່າໂດຍທາງພຣະເຢຊູ, ພຣະເຈົ້າໄດ້ຊົງ**ສ້າງທຸກງສິ່ງໃນຈັກກະວານນີ້**. ສາມ, ພຣະເຢຊູແມ່ນແສງພຣະຣັສມີ ພຣະອົງເປັນຢ່າງນີ້ ເພາະໃນປໂຍກທີສີ່ໄດ້ກ່າວວ່າ, ພຣະເຢຊູມີ**ສະພາບຢ່າງດຽວຢ່າງທັມມະຊາດ**. ນີ້ເປັນຄຳເວົ້າທີ່ສູງສຸດກ່ຽວກັບຄວາມສັກສິດຂອງພຣະຄຣິດໃນພຣະຄັມພີທັງໝົດ. ການເປັນຢູ່ແລະສະພາບຂອງພຣະເຢຊູກໍເປັນຢ່າງດຽວກັບອົງພຣະຜູ້ເປັນເຈົ້າ. ພຣະເຈົ້າພຣະບຸດບໍ່ໄດ້ມີຄວາມສັກສິດນ້ອຍກວ່າພຣະເຈົ້າພຣະບິດາ. ອົງພຣະເຢຊູໄດ້ກ່າວວ່າ, "ພຣະບິດາແລະເຮົາກໍເປັນອັນດຽວກັນ" (ໂຢຮັນ 10:30).

ສາມປໂຍດສຸດທ້າຍນີ້ຈາກເຈັດຢ່າງທີ່ເວົ້າເຖິງອົງພຣະເຢຊູໄດ້ບອກພວກເຮົາວ່າ ພຣະອົງເອງໄດ້ເປັນ**ຜູ້ຄ້ຳຊູທຸກສິ່ງ** ແລະປົກຄອງເໝືອນເປັນກະສັດຜູ້ນັ່ງ**ໃນກ້ຳຂວາຂອງຜູ້ຊົງຣິດທານຸພາບໃນບ່ອນສູງ**. ອົງພຣະເຢຊູໄດ້ກະທຳໃນອະດີດ ແລະຍັງກະທຳໃນປັດຈຸບັນເພື່ອປ່ຽນແປງຊີວິດຂອງພວກເຮົາໃນທຸກວັນນີ້: ພຣະອົງໄດ້ຕາຍທີ່ໄມ້ກາງແຂນ, **ເພື່ອຊຳຣະລ້າງຄວາມຜິດບາບ** ຂອງຄົນທັງປວງທີ່ວາງໃຈເຊື່ອໃນພຣະອົງ.

ບໍ່ມີຜູ້ໃດໃນໂລກສາມາດເພີ້ມເຕີມສິ່ງທີ່ອົງພຣະເຢຊູຄຣິດໄດ້ເຮັດໃຫ້ສຳເຣັດລົງແລ້ວ. ສາສນາທີ່ຄົນຄິດປະດິດສ້າງຂື້ນມາພະຍາຍາມທີ່ຈະເພີ້ມຄຳສອນຂອງພຣະເຢຊູຄຣິດ. ພວກອິສລາມໄດ້ມີປຶ້ມຄໍຣານ, ພວກມໍມ້ອນ ໄດ້ເພີ້ມປຶ້ມຄັມພີຫຼັກຄວາມເຊື່ອຂອງເຂົາ. ແຕ່ຄວາມເຊື່ອທີ່ຖືກຕ້ອງນັ້ນແມ່ນມີໃນອົງພຣະເຢຊູເທົ່ານັ້ນ ເພາະພຣະອົງເປັນພຣະຜູ້ເປັນເຈົ້າ. ສິ່ງພວກເຮົາຕ້ອງການປະຕິບັດຄືໃຫ້ມີຄວາມສັມພັນກັບພຣະອົງເປັນທາງສ່ວນຕົວ.

**2. <u>ພຣະເຢຊູເປັນອົງຍິ່ງໃຫຍ່</u>** (ເຮັບເຣີ 1:4-6, 10-14)

**ຄວາມຍິ່ງໃຫຍ່ຂອງພຣະຄຣິດ**

ຄຳເວົ້າສຳຄັນສອງຄຳໃນປຶ້ມເຮັບເຣີ ແມ່ນ "ດີກວ່າ" ແລະ "ຍິ່ງໃຫຍ່." ຜູ້ຂຽນປຶ້ມນີ້ໄດ້ໃຫ້ເຫດຜົນເຖິງຄວາມຍິ່ງໃຫຍ່ຂອງພຣະເຢຊູຢ່າງລະມັດລະວັງ ແລະບໍ່ມີຄວາມຜິດເລີຍ ທີ່ກ່າວວ່າພຣະເຢຊູເປັນຜູ້ທີ່ພຣະເຈົ້າເປີດເຜີຍໃຫ້ຮູ້-ພຣະອົງຍິ່ງໃຫຍ່ກວ່າຜູ້ປະກາດພຣະທັມໃນພຣະຄັມພີເດີມ (1:1-2), ໃຫຍ່ກວ່າເທວະດາ (1:4-2:18), ໃຫຍ່ກວ່າໂມເຊ ແລະໂຢຊວຍ (3:1-4:13, ໃຫຍ່ກວ່າປະໂລຫິດໃນກົດລະບຽບຂອງພວກປະໂລຫິດທັງຫລາຍ (4:14-7:28). ຜູ້ຂຽນຍັງໄດ້ກ່າວເຖິງຄວາມຍິ່ງໃຫຍ່ຂອງຄຣິສະຕຽນຕໍ່ສາສນາຢິວ ເພາະວ່າເປັນການສັນຍາອັນດີກວ່າ (8:1-13), ດີກວ່າບ່ອນນະມັສການ (9:1-10), ແລະເປັນຂອງຖວາຍອັນປະເສີດອັນຄົບບໍຣິບູນເພື່ອທຳລາຍຄວາມບາບ (9:11-10:18.)

ໃນທຸກວັນນີ້ຫລາຍໆຄົນມັກເວົ້າວ່າເຊື່ອອັນໃດກໍດີເໝືອນກັນ. ແຕ່ໃນປຶ້ມເຮັບເຣີໄດ້ເວົ້າຊ້ຳວ່າອົງພຣະເຢຊູຍິ່ງໃຫຍ່ກວ່າຄຳສອນຂອງສາສນາອື່ນໆ.

ພວກເຮົາໄດ້ເຫັນຄວາມຍິ່ງໃຫຍ່ຂອງອົງພຣະເຢຊູກວ່າຜູ້ປະກາດພຣະທັມໃນພຣະຄັມພີເດີມໃນຂໍ້ 1-3. ໃນຂໍ້ 4 ໄດ້ບອກວ່າ ພຣະເຢຊູ**ມີຕຳແໜ່ງໃຫຍ່ກວ່າຝູງເທວະດາ**, ພຣະນາມຂອງພຣະອົງ**ຍິ່ງໃຫຍ່ກວ່າຊື່ຂອງພວກເຂົາທັງໝົດ**. ດັ່ງນັ້ນ ພວກເຮົາຈຶ່ງຮູ້ວ່າພຣະເຢຊູນັ້ນຍິ່ງໃຫຍ່ກວ່າເທວະດາທັງໝົດ.

ອັກຄະສາວົກ ໂປໂລ ໄດ້ເຕືອນຄຣິສະຕຽນສມັຍທຳອິດວ່າ ບໍ່ໃຫ້ນະມັສການເທວະດາ (ກລຊ. 2:28). ໃນທຸກມື້ນີ້ກໍມີບັນຫາເໝືອນກັນ ມີປື້ມຂຽນຂື້ນມາ ມີໂທຣະທັດ ແລະຊິເນມາ ໄດ້ຊັກຈູງໃຫ້ຄົນທັງຫລາຍເອີ້ນຫາເທວະດາໃຫ້ເຂົ້າມາຊ່ວຍ ຫລາຍກວ່າເອີ້ນຫາພຣະເຢຊູຄຣິດມາຊ່ວຍ. ຄະນະພວກພະຍານພຣະເຢໂຮວາສອນຜິດວ່າພຣະເຢຊູເປັນພຽງເທວະດາ ມີກາເອນ ຜູ້ເກັ່ງກ້າ. ຄຳສອນຢ່າງນີ້ໄດ້ຍົກລຳດັບເທວະດາຂື້ນ ແລະຫລຸດອົງພຣະເຢຊູລົງ.

ໃຫ້ວາດພາບເບິ່ງວ່າມີການໂຕ້ວາທີເກີດຂື້ນເຖິງເຣື່ອງພຣະເຢຊູກັບເທວະດາ. ໃຜກໍກ່າວເຖິງເຫດຜົນວ່າຕົນເອງຖືກຕໍ່ເຣື່ອງດັ່ງກ່າວນີ້ ແລະໃນທີ່ສຸດມີນັກຂຽນປື້ມ ເຮັບເຣີ ໄດ້ຂື້ນໄປເທິງເວທີເພື່ອປະກາດ. ນັກຂຽນໄດ້ອ້າງເຖິງຂໍ້ມູນເປັນຈຳນວນຫລາຍຈົນລົ້ນພູເຂົາວ່າພຣະເຢຊູຍິ່ງໃຫຍ່ກວ່າຝູງເທວະດາ ໂດຍອ້າງເຖິງຂໍ້ພຣະຄັມພີເຈັດຢ່າງໃນພຣະຄັມພີເດີມ. ນີ້ເປັນເຣື່ອງຂອງພຣະຄຣິດທີ່ພວກເຮົາອ່ານໃນຂໍ້ 5-13.

ຂໍ້ 5 ຖາມວ່າ, ພຣະເຈົ້າໄດ້ກ່າວວ່າ ເທວະດາອົງໃດ "ທ່ານເປັນບຸດຂອງເຮົາ"? ບໍ່ມີຂໍ້ໃດເລີຍເວົ້າດັ່ງນັ້ນ. ແຕ່ຜູ້ຂຽນປື້ມເຮັບເຣີໄດ້ອ້າງເຖິງ ເພງສັຣເສີນ 2:7 ແລະ 2 ຊາມູເອນ 7:14 ໄດ້ສະແດງໃຫ້ຮູ້ວ່າບໍ່ເຫນືອເທວະດາ, ພຣະເຈົ້າໄດ້ກ່າວຕໍ່ອົງພຣະເຢຊູວ່າພຣະເມຊີອາແມ່ນພຣະເຢຊູ **ເປັນບຸດຂອງເຮົາ.**

ຂໍ້ 6 ໄດ້ອ້າງເຖິງພຣະບັນຍັດທີສອງ 32:43, ທີ່ໄດ້ກ່າວວ່າເທວະດາຕ້ອງນະມັສການພຣະອົງ. ຄຳເວົ້າຢ່າງນີ້ແມ່ນກ່າວເຖິງຄວາມຍິ່ງໃຫຍ່ຂອງພຣະເຢຊູ.

ຂໍ້ 10-12 ໄດ້ອ້າງເຖິງເພງສັຣເສີນ 102:25-27 ຊຶ່ງໄດ້ສະແດງໃຫ້ເຫັນວ່າພຣະເຢຊູບໍ່ມີການປ່ຽນແປງ, ພຣະອົງເປັນພຣະຜູ້ສ້າງຕລອດໄປ. ພຣະຜູ້ສ້າງ: **ໃນເບື້ອງຕົ້ນ, ພຣະອົງໄດ້ສ້າງໂລກ.** ພຣະອົງບໍ່ໄດ້ປ່ຽນແປງ ແລະເປັນຢູ່ຕລອດໄປ. ພຣະອົງຊົງເປັນຢູ່: **ເວລາຂອງພຣະອົງບໍ່ມີສິ້ນສຸດ.**

ຈຸດສູງສຸດມີຢູ່ຂໍ້ 13, ເໝືອນດັ່ງຜູ້ຂຽນປື້ມນີ້ໄດ້ເວົ້າ, **ເທວະດາອົງໃດທີ່ພຣະເຈົ້າໄດ້ກ່າວວ່າ**ໃນເຣື່ອງພຣະເຈົ້າຊົງກ່າວໃນເພງສັຣເສີນ 110:1: **ນັ່ງໃນກໍ້າຂວາຈົນເຖິງເຮົາໄດ້ເຮັດໃຫ້ສັດຕຣູຂອງທ່ານລົ້ມລົງ?** ແນ່ນອນພຣະເຈົ້າບໍ່ເຄີຍເວົ້າຕໍ່ເທວະດາອົງໃດເລີຍ. ແຕ່ພຣະເຈົ້າໄດ້ຊົງກ່າວຕໍ່ອົງພຣະເຢຊູຄຣິດ. ພຣະເຢຊູໄດ້ໃຊ້ໃນເຣື່ອງນີ້ກ່ຽວກັບພຣະອົງໃນເພງສັຣເສີນບົດນີ້ ໃນພຣະຄັມພີໃໝ່ມັດທາຍ 22: 42-45, ທີ່ໄດ້ກ່າວເຖິງການເປັນພຣະອົງເຈົ້າຂອງພຣະເຢຊູ.

ຂໍ້ 14 ໄດ້ເວົ້າເຣື່ອງເທວະດາເປັນລຳດັບ. ນຶ່ງ, ເປັນຜູ້ຮັບໃຊ້, **ພວກເພິ່ນເປັນຜູ້ຮັບໃຊ້ດ້ານວິນຍານ.** ສອງ, **ພວກເພິ່ນຖືກສົ່ງອອກໄປເພື່ອຮັບໃຊ້ຜູ້ທີ່ໄດ້ຮັບຄວາມລອດພົ້ນເປັນມໍຣະດົກ.** ເປັນດ້ວຍເຫດໃດພວກເຮົາຈຶ່ງເອົາໃຈໃສ່ຕໍ່ເທວະດາຫລາຍ ພວກເພິ່ນເປັນພຽງຜູ້ຮັບໃຊ້ໄປຮັກສາພວກໄດ້ຮັບຄວາມພົ້ນ ແລະຮັບໃຊ້ອົງພຣະຜູ້ຊ່ອຍໃຫ້ລອດພົ້ນ? ພວກເທວະດາມີຄວາມຍິນດີຫລາຍໃນເມື່ອພວກເຮົາເອົາຕາອອກຈາກພວກເພິ່ນ ແລະປັກຕາເບິ່ງອົງພຣະເຢຊູ ພຣະຜູ້ໂຜດໃຫ້ພົ້ນ (ລູກາ 15:7)

## 3. <u>ຜົນທີ່ໄດ້ຮັບເພາະບໍ່ເອົາໃຈໃສ່</u> (ເຮັບເຣີ 2:1-4)

ຜູ້ຂຽນປື້ມເຮັບເຣີ ໄດ້ສລູບບົດທີນຶ່ງວ່າອົງພຣະເຢຊູຍິ່ງໃຫຍ່ກວ່າເທວະດາ. ບົດທີສອງເວົ້າເຖິງຄຳເຕືອນ 5 ຢ່າງ (ເບິ່ງ 3:7-4:13; 5: 11-6:20; 10:26-39; ແລະ 12:15-29). ຄຳເຕືອນນີ້ໄດ້ພົບເຫັນໃນຄຳເວົ້າສຸດທ້າຍໃນ ບົດທີ 1: ຄວາມພົ້ນ, ເຫດສັນນັ້ນ ບົດ 2:1 ໄດ້ອ້າງເຖິງເຣື່ອງໃນບົດທີນຶ່ງ ທີ່ກ່າວເຖິງຄວາມຍິ່ງໃຫຍ່ຂອງອົງພຣະເຢຊູ. ຂື້ນກັບສິ່ງທີ່ກ່າວມານັ້ນຜູ້ຂຽນໄດ້ເວົ້າວ່າພວກເຮົາຕ້ອງເອົາໃຈໃສ່ໃຫ້ຫລາຍຂື້ນ. ພວກເຮົາຈຳເປັນຕ້ອງຍຶດເອົາຂ່າວປະເສີດໄວ້ໃຫ້ໝັ້ນ **ເພື່ອພວກເຮົາຈະບໍ່ຫັນໜີອອກຈາກຄວາມເຊື່ອ.**

ຄຳເຕືອນນີ້ໄດ້ເວົ້າຕໍ່ຄຣິສະຕຽນ (ສັງເກດເບິ່ງວ່າຜູ້ຂຽນໄດ້ໃຊ້ຄຳເວົ້າ ເຮົາ). ຢ່າງໃດກໍຕາມຄຳເຕືອນນັ້ນບໍ່ໄດ້ຫັນໜີຈາກຄວາມເຊື່ອໄປ ແຕ່ເປັນຄຳເຕືອນໃຫ້ຍຶດຖືຄວາມເຊື່ອໄວ້ໃຫ້ດີເພື່ອພວກເຂົາຈະບໍ່ຫັນຫນີຈາກຄວາມຈິງເຣື່ອງຂ່າວປະເສີດ.

ຂໍ້ 2-3 ໄດ້ເວົ້າວ່າຖ້າສິ່ງທີ່ເທວະດາກ່າວນັ້ນຖືວ່າເປັນຂໍ້ຜູກມັດອັນຖືກຕ້ອງ, ເປັນສິ່ງສຳຄັນຫລາຍປານໃດໃນເມື່ອພຣະຄັມພີໄດ້ກ່າວດ້ວຍອົງພຣະຜູ້ເປັນພຣະເຈົ້າ? ພວກເຮົາໄດ້ເຫັນແລ້ວວ່າພຣະເຢຊູຍິ່ງໃຫຍ່ໄປກວ່າເທວະດາ.

ດັ່ງນັ້ນ, ຄຳສອນ ຫລືຄຳເວົ້າຂອງອົງພຣະເຢຊູກໍສຳຄັນກວ່າຂອງພວກເທວະດາ. ກົດລະບຽບໃນພຣະຄັມພີເດີມໄດ້ເປີດໃຫ້ຮູ້ດ້ວຍເທວະດາ (ກິຈການ 7:53; ຄາລາເຕັ້ຽ 3:19), **ແຕ່ໃນເມື່ອບໍ່ເຊື່ອຟັງຈະໄດ້ຮັບການລົງໂທດ.** ດັ່ງນັ້ນ, **ເຮັດແນວໃດພວກເຮົາອາດຈະໜີພົ້ນໄດ້ ຖ້າພວກເຮົາປະລະຄວາມພົ້ນອັນຍິ່ງໃຫຍ່ໄດ້?** ເວົ້າໄດ້ອີກວ່າ, ຖ້າຄົນເຮົາປະລະກົດຂອງພຣະຄັມພີເດີມກໍຍັງໄດ້ຖືກລົງໂທດ ຖ້າປະລະຂ່າວປະເສີດໂທດກັມນັ້ນຈະມີຫລາຍເທົ່າໃດ?

ຜູ້ຂຽນປຶ້ມເຮັບເຣີ ໄດ້ເຕືອນຜູ້ອ່ານໃຫ້ເອົາໃຈໃສ່ໃນຂ່າວປະເສີດໃຫ້ຫລາຍຂຶ້ນ. ເຖິງແມ່ນວ່າພວກເຂົາເປັນຄຣິສະຕຽນໃນຍຸກຕໍ່ມາ, ພວກເຂົາໄດ້ເຊື່ອໃນຄວາມຈິງທີ່ພວກອັຄສາວົກຜູ້ໄດ້ຮັບການຖ່າຍທອດຈາກອົງພຣະເຢຊູ.

## ບົດຮຽນຊີວິດ

ຕາມທຳນຽມຂອງຊາວໂລກຖືກວ່າສາມສາໃດກໍມີຄຸນຄ່າສເມີກັນ, ແຕ່ພຣະຄັມພີໄດ້ສອນວ່າ ພຣະເຢຊູຍິ່ງໃຫຍ່ກວ່າ. ພຣະເຢຊູແມ່ນການເປີດເຜີຍອັນສູງສຸດຄວາມຈິງຂອງພຣະເຈົ້າ. ພຣະເຢຊູເປັນພຣະເຈົ້າເຕັມບໍຣິບູນ ແລະພຣະອົງຍິ່ງໃຫຍ່ກວ່າເທວະດາ. ມັນເປັນເຣື່ອງສຳຄັນທີ່ຈະຫັນໜີຈາກຂ່າວປະເສີດເຣື່ອງຄວາມພົ້ນຜ່ານທາງອົງພຣະເຢຊູຄຣິດ.

ເຮັດແນວໃດພວກເຮົາຈຶ່ງສາມາດເອົາຊີວິດມອບໃຫ້ອົງພຣະເຢຊູໄດ້?

- ຖ້າທ່ານຍັງບໍ່ທັນໄດ້ຮັບເອົາອົງພຣະເຢຊູເປັນພຣະຜູ້ໂຜດໃຫ້ພົ້ນເປັນທາງສ່ວນຕົວ, ໃຫ້ເຮັດສາໃນວັນນີ້. ບອກໃຫ້ອາຈານຂອງທ່ານຮູ້ຈັກນຳດ້ວຍ.
- ຖ້າທ່ານໄດ້ໄປຮ່ວມໂບດນັ້ນໂບດນີ້, ໃຫ້ອ້ອນວອນວ່າພຣະຄຣິດຈະໃຊ້ທ່ານຕາມພຣະພອນທີ່ທ່ານມີ? ແລະໃຫ້ກາຍເປັນສະມາຊິກໃນໂບດໃດໂບດນຶ່ງເພື່ອທ່ານຈະໄດ້ຮັບໃຊ້.
- ເລີ້ມໃຫ້ເປັນນິສັຍໃຫ້ຈົດເອົາບົດເທສນາໃນເວລານະມັສການ ເພື່ອຈະຊ່ອຍທ່ານເອົາໃຈໃສ່ໃນຂ່າວປະເສີດ.
- ໃຫ້ທ່ານຈົດນັ້ຽມເວລາທີ່ທ່ານຮັບໃຊ້ໃນໂບດ. ເວລານະມັສການ, ອອກໄປປະກາດ, ແລະຮັບໃຊ້ຜູ້ອື່ນ, ຖ້າບໍ່ດັ່ງນັ້ນ ໃຫ້ທ່ານປ່ຽນວິທີທ່ານຮັບໃຊ້ໃນໂບດ ເພື່ອທ່ານຈະຈັບຕາເບິ່ງອົງພຣະເຢຊູໃຫ້ຫລາຍຂຶ້ນ.

ເວລາເປໂຕ ກັບໂຢຮັນຖືກເຈັບເພາະພວກເພິ່ນເທສນາດ້ວຍຄວາມກ້າຫານວ່າ, "ໃນຜູ້ອື່ນຄວາມລອດພົ້ນບໍ່ມີ" (4:12). ການທີ່ຍອມຜ່ອນສັ້ນຜ່ອນຍາວເຣື່ອງຂ່າວປະເສີດນັ້ນເປັນສິ່ງອັນຕະລາຍ.

ອຸປຖັມໂດຍ ລາວຊາວເທີນບັບຕິສສັມພັນ www.lsbf.org.,by BV.